## ກອງປະຊຸມສະຫຼຸບລາຍງານການເຄື່ອນໄຫວອົງກຂອງຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດການບັງຄັບໃຊ້ລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ

ຈັດໂດຍ : ຫ້ອງວ່າການປົກຄອງແຂວງບໍລິຄຳໄຊ ຮ່ວມກັບ ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ

ໃນວັນທີ 15 ພຶດສະພາ 2017






ໃນຕອນເຊົ້າຂອງວັນທີ 15 ພຶດສະພາ 2017 ຫ້ອງວ່າການປົກຄອງແຂວງບໍລິຄໍາໄຊ ຮ່ວມກັບ ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມຂຶ້ນຢູ່ທີ່ຫ້ອງປະຊຸມຊັ້ນ IV ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາບໍລິຄໍາໄຊ ເພື່ອສະຫຼຸບ ແລະ ຕີລາຄາຄືນ ການຈັດຕັ້ງປະຕິບັດວຽກງານຂອງຄະນະກໍາມະການຕິດຕາມການຈັດຕັ້ງປະຕິບັດການບັງຄັບໃຊ້ລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບຂັ້ນແຂວງ ( ຄຕບກ.ບຊ ) 1 ປີຜ່ານມາ ໂດຍການເປັນປະທານຂອງທ່ານ ບຸນເສັງ ປະທໍາມະວົງ ຮອງເຈົ້າແຂວງງບໍລິຄໍາໄຊ, ທັງເປັນຫົວໜ້າຄະນະກໍາມະການ ( ຄຕບກ.ບຊ ). ໂດຍມີບັນດາພະແນກການຕ່າງໆ ອ້ອມຂ້າງແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ, ສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ຄະນະພາສີປະຈໍາດ່ານສາກົນ, 3 ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ແລະ ບັນດາສາຂາ ແລະ ໜ່ວຍບໍລິການທະນາຄານທຸລະກິດ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຢ່າງພ້ອມ ພຽງ.




ເພື່ອເປັນການຕີລາຄາຄືນກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ ທ່ານ ບຸນວົງ ດວງດອກເກດ ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ, ຮອງຫົວໜ້າຄະນະກໍາມະການ( ຄຕບກ.ບຊ ) ໄດ້ຂຶ້ນຜ່ານບົດສະຫຼຸບປີ 2016 ແລະ ຜ່ານແຜນການເຄື່ອນໄຫວວຽກປີ 2017, ໄດ້ຍົກໃຫ້ເຫັນວ່າການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບໄດ້ຫັນເຂົ້າສູ່ລະບຽບການເທື່ອລະກ້າວ ຍ້ອນທຸກພາກສ່ວນໃຫ້ຄວາມສໍາຄັນ ແລະ ພ້ອມກັນຈັດຕັ້ງປະຕິບັດບັນ ດານິຕິກໍາ ແລະ ລະບຽບການຕ່າງໆທີ່ວາງອອກມາໃນແຕ່ລະໄລຍະ ເປັນຕົ້ນແມ່ນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບທີ 55/ສພຊ, ລົງວັນທີ 22 ທັນວາ 2014, ດໍາລັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະ ເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ ສະບັບເລກທີ 150/ນຍ, ລົງວັນທີ 18 ພຶດສະພາ 2007. ຊຶ່ງມັນໄດ້ສະແດງໃຫ້ເຫັນວ່າເມື່ອມີບັນດານິຕິກໍາອອກມາ ແລະ ໄດ້ມີການໂຄສະນາຜ່ານສື່ຕ່າງໆ ເຮັດໃຫ້ພໍ່ແມ່ປະຊາຊົນຕະຫຼອດຮອດຊາວຄ້າຂາຍຮັບຮູ້ໄດ້ເຖິງລະບຽບກົດໝາຍ ແລະຫັນມາຕິດ, ປະກາດລາຄາສິນຄ້າ ແລະ ການເກັບຄ່າບໍລິການ ເປັນເງິນກີບຫຼາຍຂຶ້ນຖ້າທຽບໃສ່ໃນໄລຍະຜ່ານມາ, ບັນດາຮ້ານແລກປ່ຽນເງິນຕາທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ບໍ່ສອດ ຄ່ອງກັບລະບຽບ ກໍ່ຫັນເຂົ້າມາສະເໜີຂໍສ້າງຕັ້ງຮ້ານແລກປ່ຽນເງິນຕາ ນໍາສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ລະບຽບຄຸ້ມຄອງຮ້ານແລກປ່ຽນເງິນຕາ.



ຈາກນັ້ນທ່ານ ບຸນເສັງ ປະທໍາມະວົງ ຮອງເຈົ້າແຂວງງບໍລິຄໍາໄຊ ທັງເປັນປະທານກອງປະຊຸມໄດ້ໂອ້ລົມ ແລະ ເນັ້ນໃຫ້ທຸກພາກສ່ວນເປັນເຈົ້າການ ແລະ ເອົາໃຈໃສ່ເພີ່ມການລົງໂຄສະນາໃຫ້ສະຖາບັນການສຶກສາເພື່ອປູກຈິດສໍານຶກໃຫ້ນ້ອງນັກຮຽນນັກສຶກສາ ຮັບຮູ້ປະຫວັດຄວາມເປັນມາ ແລະ ຄຸນຄ່າຂອງເງິນກີບ, ໃຫ້ເອົາໃຈໃສ່ໃນການຄຸ້ມຄອງ, ການຕິດຕາມ, ການກວດກາ, ການນໍາທຶນເຂົ້າມາລົງທຶນ ຫຼື ການນໍາ

ເງິນສົດເຂົ້າ-ອອກເປັນເງິນຕາຕ່າງປະເທດຜ່ານດ່ານຕ່າງໆ ຕ້ອງໄດ້ເພີ່ມຄວາມລະມັດລະວັງເພື່ອຫຼີກລ້ຽງການຟອກເງິນ, ໃຫ້ທຸກພາກສ່ວນທີ່ຮັບຜິດຊອບຕ້ອງໄດ້ເປັນເຈົ້າການ ປະສານສົມທົບກັນທາງດ້ານຂໍ້ມູນຂ່າວສານຕ່າງໆເພື່ອຕິດຕາມ, ກວດກາ ແລະ ຄຸ້ມຄອງຕໍ່ກັບແຫຼ່ງທຶນ ແລະ ທຶນທີ່ໄດ້ນຳເຂົ້າມາ. ຊຶ່ງທ່ານປະທານໄດ້ເນັ້ນໃຫ້ 4 ພາກສ່ວນຫຼັກ ຕ້ອງໄດ້ເອົາໃຈໃສ່ ເປັນຕົ້ນແມ່ນສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ, ພະແນກແຜນການ-ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກສ່ວຍສາອາກອນ.

ຂ່າວ/ພາບ: 11: ພະແນກເສດຖະກິດ-ເງິນຕາ( ທຫລ.ສຂ ).